

# ກຳພ້າ ກັບ ຜີນ້ອຍ

ຂຽນເປັນຄຳເວົ້າທຳມະດາ ໂດຍ ດວງເດືອນ ບຸນຍາວົງ ● ຮູບແຕ້ມໂດຍ ວົງສະຫວັນ ດຳລົງສຸກ

# ກ່ຳພ້າ ກັບ ຜີນ້ອຍ



ຂຽນເປັນຄຳເວົ້າທຳມະດາ ໂດຍ ດວງເດືອນ ບຸນຍາວົງ

ຮູບແຕ້ມ ໂດຍ ວົງສະຫວັນ ດຳລົງສຸກ

ນິທານພື້ນເມືອງ ເລື່ອງ
ກ່ຳພ້າ ກັບ ຜີນ້ອຍ
ພາກ 1
ຂຽນເປັນຄຳເວົ້າທຳມະດາ ດວງເດືອນ ບຸນຍາວົງ
ຮູບແຕ້ມ ໂດຍ ວົງສະຫວັນ ດຳລົງສຸກ
ອອກແບບຈັດໜ້າ ບໍລິສັດ ດອກເກດ ຈັດພິມ ຈຳກັດ

ຈັດພິມໂດຍ: ສຳນັກພິມ ດອກເກດ

ຮ່ວມກັບ: ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ
Action with Lao Children (ALC)
ໂທ 021-416064

ອຸປະຖຳໂດຍ : Gakushuin Women's College

© ສະຫງວນລິຂະສິດບົດ: ນາງ ດວງເດືອນ ບຸນຍາວົງ.
© ສະຫງວນລິຂະສິດຮູບແຕ້ມ: ວົງສະຫວັນ ດຳລົງສຸກ.
ຜູ້ໃດຈະນຳເອົາເນື້ອຄວາມຕອນໃດຕອນໜຶ່ງ ຫລືຮູບໃດໜຶ່ງ ໃນປຶ້ມນີ້ໄປ
ຊົມໃຊ້ ຫລືພິມອອກໃໝ່ ຕ້ອງໄດ້ຂໍອະນຸຍາດ ຈາກ ALC ຜູ້ຈັດພິມ ແລະເຈົ້າຂອງບົດ
ແລະຮູບແຕ້ມ ຕາມກົດໝາຍ/ລະບຽບ ວ່າດ້ວຍການປົກປ້ອງຊັບສິນທາງປັນຍາ.
ທະບຽນອະນຸຍາດເລກທີ: ທບ 216/ພຈ 30062011
ພິມຄັ້ງທີ 7
ຈຳນວນ 2000 ຫົວ
ພິມທີ່ ລາວ ຢູນິ ພຣິ້ນ

ຄຳນຳ ໃນການຈັດພິມຄັ້ງທີ 7, ປີ 2011

# ພິມເຈັດເທື່ອແລ້ວເດີ້ ...!

ປຶ້ມກ່ຳພ້າກັບຜີນ້ອຍ ແລະ ກ່ຳພ້າກັບນາງງາ ກຶກຕີພິມອີກຄັ້ງ, ເທື່ອທີເຈັດແລ້ວເດີ້...! ເຫດທີ່ໄດ້ພິມສອງເລື່ອງນີ້ອອກມາອີກຄັ້ງ ມີສອງຂໍ້ຄື:

1. ແນ່ນອນວ່າແມ່ນ ສຽງຮຽກຮ້ອງຂອງແຟນໆ ທັງຮຸ່ນນ້ອຍຮຸ່ນໃຫຍ່ ຈາກທົ່ວປະເທດ ທີ່ສົ່ງຂ່າວເຂົ້າມາຮຽກຫາ ALC ວ່າ "ເລື່ອງກ່ຳພ້າຢູ່ຫ້ອງສະໝຸດໝົດແລ້ວ" "ຂາດຈົນສ້ອມແປງບໍ່ໄດ້ແລ້ວ" "ຄົນກຸາມຫາຫລາຍໆ ທັງເດັກນ້ອຍທັງຜູ່ໃຫຍ່" "..." ຮຽກຮ້ອງມາປານນີ້ ຈະໃຫ້ເສຽສັດທາໄດ້ຈັ່ງໃດ.

2. ຕອນນີ້ ເລື່ອງຂອງທ້າວກ່ຳພ້າ ບໍ່ໄດ້ເປັນແຕ່ນິທານພື້ນເມືອງຊື່ໆ ແລ້ວເດີ້, ແຕ່ໄດ້ກາຍເປັນໜຶ່ງໃນເລື່ອງທີ່ ເດັກນ້ອຍລາວທຸກຄົນຕ້ອງອ່ານ ເພາະໄດ້ຮັບການບັນຈຸເຂົ້າຢູ່ໃນຫລັກສູດ ວິຊາພາສາລາວ ຂອງຊັ້ນມັດທະຍົມປີທີ 1 ແລ້ວ. ຫາກດ້ວຍເນື້ອທີ່ອັນຈຳກັດໃນປຶ້ມແບບຮຽນ ເຮັດໃຫ້ເນື້ອເລື່ອງ ແລະ ອາລົມບາງຕອນຂາດໄປ. ໜ້າຈະດີກວ່າ ກ້າຄູແນະນຳໃຫ້ນັກຮຽນຢືມປຶ້ມເລື່ອງນີ້ ຈາກຫ້ອງສະໝຸດໄປອ່ານຕື່ມ ຫລື ຈະເອົາປຶ້ມມາພານັກຮຽນອ່ານໃນຫ້ອງນຳ ກໍຍິ່ງມ່ວນ ທັງໄດ້ເນື້ອໃນຄົບຖ້ວນ. ຂໍໃຫ້ຄູທຸກໂຮງຮຽນທີ່ໄດ້ຮັບປຶ້ມເລື່ອງນີ້ ນຳໃຊ້ຢ່າງເຕັມທີ່.

ຂໍຂອບໃຈ ອາຈານ ດວງເດືອນ ບຸນຍາວົງ ເປັນຢ່າງສູງ ສຳລັບການນຳເລື່ອງລາວຂອງທ້າວກ່ຳພ້າ ມາຮຽບຮຽງເປັນເລື່ອງສຳລັບເດັກ ທີ່ງົດງາມ ທັງເນື້ອຫາ ພາສາ ແລະ ຄະຕິທຳ. ຂອບໃຈຜູ່ອຸປະກຳທຸກທ່ານ ທັງໃນອະດີດ ແລະ ປັດຈຸບັນ, ທ່ານໄດ້ເຮັດໃຫ້ "ທ້າວກ່ຳພ້າ" ກາຍເປັນຕຳນານ ທີ່ຈະຢູ່ຄູ່ກັບເດັກນ້ອຍລາວ ຕະຫລອດໄປ.

ກໍລະກົດ 2011

ຄະນະບັນນາທິການ ALC

ປາງກ່ອນກີ້ ຍັງມີທ້າວນ້ອຍຄົນໜຶ່ງ ເປັນກຳພ້າ ພໍ່ແມ່ຕາຍປະແຕ່ລາວຍັງນ້ອຍ ປ່ອຍໃຫ້ຢູ່ຄົນດຽວປ່ຽວພອຍ ທ່ຽວຂໍທານ ຊາວບ້ານເລີຍເອີ້ນວ່າ ບັກກຳພ້າ.

ກາງເວັນ ກຳພ້າຫລິ້ນກັບໝູ່ຢ່າງມ່ວນຊື່ນ ແຕ່ກາງຄືນ ທ້າວຕ້ອງນອນດຽວ ປ່ຽວເຫງົາຢູ່ໃນຕູບບໍ່ມີຝາ ຍາມໜາວມາ ໄດ້ດັງໄຟຜີງ ເພາະບໍ່ມີເສື້ອຜ້າ ແລະຜ້າຟາ ຕຸ້ມຫົ່ມ.







ຫລາຍຟ້າຫລາຍຝົນຜ່ານພົ້ນໄປ ກ່ຳພ້າເຕີບໃຫຍ່ດ້ວຍອາຫານຂອງທານ ຊີ້ນແຫ້ງປາຕາຍບາງມື້ໄດ້ເຂົ້ານຳໄທເຮືອນເໜືອ ໄດ້ເກືອນຳໄທເຮືອນໃຕ້ ຜູ້ໃຈດີມີເມດຕາ ກໍບ່າຍຊີ້ນຈີ່ປາແຫ້ງໃສ່ມືໃຫ້ ຜູ້ຂີ້ກີ່ກໍໄລ່ໜີ ທັງດ່າວ່າໃສ່.



ເມື່ອເຕີບໃຫຍ່ສອນບ່າວ ກ່ຳພ້າໄປຂຸດດິນກາງຫຍ້າຊອຍເຮືອນອື່ນ ພໍໄດ້ເຂົ້າປາອາຫານລ້ຽງທ້ອງ ກ່ຳພ້າຄຶດຮຸ່ມໆວ່າ ເຮັດແນວໃດ ຈຶ່ງຈະມີໄຮ່ນາຮົ້ວສວນຄືເພິ່ນ.

ປີໜຶ່ງ ເກີດນ້ຳຖ້ວມນາ ເຂົ້າປາຫາຍາກ, ກ່ຳພ້າອັດສົນຫລາຍ ພໍ່ບ້ານອີ່ດູຕົນຈຶ່ງບອກວ່າ:

- ກ່ຳພ້າ ເອີ້ຍ ! ຢູ່ແຄມດົງໃຫຍ່ພຸ້ນ ມີນາເຮື້ອຢູ່ທົ່ງໜຶ່ງ
ມຶງໄປສັບຊ່າວໃສ່ເຂົ້າ ໃສ່ສາລີໄວ້ກິນສາ !"





24 / VI

ກ່ຳພ້າດີໃຈ ຈຶ່ງຫາຂໍຢືມມີດພ້າເຄື່ອງໃຊ້ຈຳເປັນນຳຊາວບ້ານ

ຫ້າມຈຳໜ່າຍ





ພວກໝູ່ກໍດີໃຈ ແຫ່ອອກໄປຊ່ອຍກາງປ່າຕັດໄມ້ ມາປຸກຕູບນ້ອຍພໍຊິ້ນແດດຊິ້ນຝົນ.

- ເອີ້ຍ ! ກ່ຳພ້າ ເຮົາໄດ້ຍິນວ່າໃນດົງນີ້ມີຜີຮ້າຍ ໂຕນອນຄົນດຽວເດີ້ ພວກເຮົາບໍ່ຢູ່ນຳໃດ໋" ຜູ້ໜຶ່ງວ່າຂຶ້ນ ເມື່ອຄ້ອຍຄ່ຳມາ.

- ທີ່ນີ້ກໍຂອບໃຈນຳໝູ່ຫລາຍແລ້ວ ເຮົານອນຜູ້ດຽວກໍໄດ້ ແຕ່ມື້ໜ້າ ພວກໂຕມາຫລິ້ນນຳອີກແດ່ເດີ້ !" ກ່ຳພ້າເວົ້າ.

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ